ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 1896/ກປ

ນະຄອນຫຼວງວຽງຈັນ, ວັນທີ 29 MAR 2023

# ແຈ້ງການ

ເຖິງ: - ຫ້ອງການ, ບັນດາກົມ, ບັນດາສະຖາບັນ, ບັນດາສູນ, ບັນດາວິທະຍາໄລ ແລະ ໂຮງຮຽນ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້;
- ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ຢຸດຕິການຮັບເອົາພະນັກງານຕາມສັນຍາ ແລະ ອາສາສະໝັກໃໝ່ ໃນຮູບການຕ່າງໆເຂົ້າເຮັດວຽກໃນອົງການບໍລິຫານລັດ.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຢຸດຕິຮັບເອົາພະນັກງານຕາມສັນຍາ ແລະ ອາສາສະໝັກໃໝ່ ໃນຮູບການຕ່າງໆເຂົ້າເຮັດວຽກໃນອົງການບໍລິຫານລັດ ສະບັບເລກທີ 01/ນຍ, ລົງວັນທີ 17 ມັງກອນ 2023;
- ອີງຕາມ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການແບ່ງຕົວເລກລັດຖະກອນໃໝ່ ປະຈຳປີ 2023 ຂອງກະຊວງພາຍໃນ ສະບັບເລກທີ 08/ພນ, ລົງວັນທີ 07 ກຸມພາ 2023;
- ອີງຕາມ ໜັງສືສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 0520/ກຈພ, ລົງວັນທີ 14 ມີນາ 2023.

ກະຊວງກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດແຈ້ງ ມາຍັງທ່ານຊາບວ່າ: ໄລຍະຜ່ານມາບາງອົງການຂັ້ນສູນກາງ ແລະ ອົງການຂັ້ນທ້ອງຖິ່ນ ຍັງສືບຕໍ່ຮັບເອົາ ອາສາສະໝັກ ແລະ ສັນຍາຈ້າງດ້ວຍຮູບການຕ່າງໆ ເຮັດໃຫ້ພະນັກງານຕາມສັນຍາ ແລະ ອາສາສະໝັກ ບໍ່ມີທ່ອງທ່າຫຼຸດລົງ. ສະນັ້ນ, ເພື່ອເປັນການຜັນຂະຫຍາຍ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການຢຸດຕິຮັບເອົາພະນັກງານຕາມສັນຍາ ແລະ ອາສາສະໝັກໃໝ່ ໃນຮູບການຕ່າງໆເຂົ້າເຮັດວຽກໃນອົງການບໍລິຫານລັດ ແລະ ເພື່ອແກ້ໄຂສະພາບດັ່ງກ່າວ ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງອອກແຈ້ງການດັ່ງນີ້:

1. ໃຫ້ຫ້ອງການ, ບັນດາກົມ, ບັນດາສະຖາບັນ, ບັນດາສູນ, ບັນດາວິທະຍາໄລ ແລະ ໂຮງຮຽນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້ ແລະ ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ໃຫ້ຢຸດຕິການຮັບເອົາພະນັກງານຕາມສັນຍາ ແລະ ອາສາສະໝັກໃນຮູບການຕ່າງໆ ເຂົ້າໃນການຈັດຕັ້ງພັກ-ລັດ;
2. ໃຫ້ສະຫຼຸບສັງລວມ ບັນຊີລາຍຊື່ ແລະ ນາມສະກຸນ, ວັນ, ເດືອນ, ປີເຂົ້າເປັນພະນັກງານຕາມສັນຍາ ແລະ ອາສາສະໝັກຢ່າງລະອຽດ (ສະເພາະຜູ້ທີ່ເລີ່ມເປັນພະນັກງານຕາມສັນຍາ ແລະ ອາສາສະໝັກ ແຕ່ປີ 2018 ຄືນຫຼັງ);

3. ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ເປັນໃຈກາງໃນການປະສານສົມທົບກັບ ຫ້ອງການ, ບັນດາກົມ, ບັນດາສະຖາບັນ, ບັນດາວິທະຍາໄລ ແລະ ໂຮງຮຽນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ພ້ອມທັງຕິດຕາມ, ກວດກາ, ຊຸກຍູ້ ແລະ ແນະນຳທຸກພາກສ່ວນ ໃນການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ແລ້ວລາຍງານຄວາມຄືບໜ້າໃຫ້ການນຳກະຊວງ ຊາບເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຂອງແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ

ກະຊວງກະສິກຳ ແລະ ປ່າໄມ້
ລັດຖະມົນຕີ

ທອງພັດ ວົງມະນີ

ກະຊວງ ກະສິກຳ-ປ່າໄມ້
ຂາເຂົ້າ
ເລກທີ 0589
ວັນທີ 21. 2. 23
ເວລາ.........................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງແລະພະນັກງານ
ຂາເຂົ້າ
ເລກທີ.....................
ວັນທີ.....................

ເລກທີ .....01..... /ນຍ

ນະຄອນຫຼວງວຽງຈັນ, ວັນທີ 17 ມັງກອນ 2023

## ຄຳສັ່ງ

## ວ່າດ້ວຍການຢຸດຕິຮັບເອົາພະນັກງານຕາມສັນຍາ ແລະ ອາສາສະໝັກໃໝ່ ໃນຮູບການຕ່າງໆ ເຂົ້າເຮັດວຽກໃນອົງການບໍລິຫານລັດ

ເຖິງ: ບັນດາທ່ານ ລັດຖະມົນຕີ, ບັນດາຫົວໜ້າອົງການຂັ້ນສູນກາງ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ ໃນທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງໃສ່ສະພາບການປັບປຸງກົງຈັກການຈັດຕັ້ງລັດ ແລະ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ.

ໃນຕົ້ນປີ 2000 ລັດຖະບານໄດ້ອະນຸມັດຕົວເລກພະນັກງານຕາມສັນຍາ ໃຫ້ແກ່ບັນດາກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອເພີ່ມກຳລັງຊ່ວຍໃນການປະຕິບັດໜ້າທີ່ວຽກງານຂອງແຕ່ລະພາກສ່ວນທີ່ມີຄວາມຈຳເປັນ. ມາຮອດ ປີ 2004 ລັດຖະບານໄດ້ໂຈະການຮັບພະນັກງານຕາມສັນຍາດັ່ງກ່າວ ຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 110/ນຍ, ລົງວັນທີ 02 ສິງຫາ 2004. ແຕ່ໃນພາກປະຕິບັດຕົວຈິງມີບາງກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຍັງສືບຕໍ່ຮັບເອົາພະນັກງານຕາມສັນຍາດ້ວຍຮູບການຈ້າງເອງ ແລະ ອາສາສະໝັກເຂົ້າ ໃນການຈັດຕັ້ງຂອງຕົນເປັນຈຳນວນຫລວງຫລາຍ ເພື່ອລໍຖ້າເຂົ້າເປັນລັດຖະກອນ ອັນເປັນສາເຫດເຮັດໃຫ້ຈຳນວນພະນັກງານຕາມສັນຍາ ແລະ ອາສາສະໝັກດັ່ງກ່າວ ບໍ່ມີທ່ອງທາງຫຼຸດລົງ, ຈຳນວນໜຶ່ງກໍ່ມີອາຍຸກະສຽນເກີນກຳນົດ. ສະພາບດັ່ງກ່າວໄດ້ສົ່ງຜົນກະທົບໂດຍກົງຕໍ່ວຽກງານຄຸ້ມຄອງລັດຖະກອນເປັນຕົ້ນແມ່ນການສະເໜີບັນຈຸເຂົ້າເປັນລັດຖະກອນບໍ່ຖືກຕ້ອງ ຕາມລະບຽບການ ແລະ ເປັນສາເຫດຂອງປະກົດການຫຍໍ້ທໍ້ຕ່າງໆໃນສັງຄົມ ກໍ່ຄືວຽກງານຄຸ້ມຄອງລັດຖະກອນໃນໄລຍະຜ່ານມາ.

ສະນັ້ນ, ເພື່ອແກ້ໄຂຄວາມຫຍຸ້ງຍາກ, ສັບສົນຢູ່ໃນອົງການຈັດຕັ້ງພັກ-ລັດ ແລະ ເພື່ອເຮັດໃຫ້ວຽກງານຄຸ້ມຄອງລັດຖະກອນທັນເຂົ້າສູ່ລະບົບ, ຄຸ້ມຄອງດ້ວຍນິຕິກຳ ແລະ ລະບຽບການຢ່າງເຂັ້ມງວດ ແລະ ມີປະສິດທິພາບ ທັງເປັນການສະກັດກັ້ນບັນຫາຫຍໍ້ທໍ້ຕ່າງໆ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ :

1. ໃຫ້ບັນດາກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຢຸດຕິການຮັບເອົາພະນັກງານຕາມສັນຍາ ແລະ ອາສາສະໝັກໃນຮູບການຕ່າງໆ ເຂົ້າໃນອົງການຈັດຕັ້ງພັກ-ລັດ.

2. ໃຫ້ບັນດາກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ສະຫຼຸບຕີລາຄາ ດ້ານຕັ້ງໜ້າ ແລະ ດ້ານຫຍໍ້ທໍ້ ຂອງການມີພະນັກງານຕາມສັນຍາ ແລະ ອາສາສະໝັກໃນຮູບການຕ່າງໆ ໃນໄລຍະຜ່ານມາ ໂດຍການຂຶ້ນບັນຊີລາຍຊື່ ແລະ ນາມສະກຸນ, ວັນ, ເດືອນ, ປີເຂົ້າເປັນພະນັກງານຕາມສັນຍາ ແລະ ອາສາສະໝັກຢ່າງລະອຽດ (ສະເພາະຜູ້ທີ່ເລີ່ມເປັນພະນັກງານຕາມສັນຍາ ແລະ ອາສາສະໝັກ ແຕ່ປີ 2018 ຄືນຫລັງ) ແລະ ໃຫ້ເອົາໃຈໃສ່ແກ້ໄຂຈຳນວນພະນັກງານດັ່ງກ່າວທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ຫຼຸດລົງ ຫຼື ບໍ່ມີເລີຍ ໃນທ້າຍປີງົບປະມານ ປີ 2025 ໂດຍການສ້າງແຜນລະອຽດ ໃນການຈັດຕັ້ງປະຕິບັດ ແລ້ວລາຍງານໃຫ້ກະຊວງພາຍໃນຊາບ ເພື່ອຕິດຕາມ, ກວດກາ, ສັງລວມ ແລະ ລາຍງານລັດຖະບານຢ່າງເປັນປົກກະຕິ; ສຳລັບຜູ້ທີ່ມີຄວາມຫ້າວຫັນ, ມີມາດຕະຖານເງື່ອນໄຂຄົບຖ້ວນ ແລະ ສອດຄ່ອງຕາມຕຳແໜ່ງງານກໍ່ໃຫ້ຄັດເລືອກສອບເສັງເຂົ້າເປັນລັດຖະກອນຕາມລະບຽບການ, ສຳລັບຜູ້ທີ່ບໍ່ຫ້າວຫັນ, ບໍ່ຄົບເງື່ອນໄຂ ແລະ ມີວິຊາສະເພາະບໍ່ສອດຄ່ອງຕາມຕຳແໜ່ງງານ ແລະ ເຮັດສັນຍາຫລັງປີ 2018 ເຖິງປະຈຸບັນ ໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ ຢຸດຕິສັນຍາກັບພວກກ່ຽວ, ພ້ອມທັງຝຶກອົບຮົມວິຊາຊີບໃໝ່ ແລະ ລະດົມໃຫ້ໄປປະກອບອາຊີບອື່ນທີ່ເໝາະສົມກັບຄວາມຮູ້ຄວາມສາມາດ.

3. ຈຳນວນພະນັກງານຕາມສັນຍາ ຫລື ອາສາສະໝັກທີ່ໄດ້ບັນຈຸເຂົ້າເປັນລັດຖະກອນ ຫລື ອອກຈາກການຈັດຕັ້ໄປແລ້ວກໍ່ໃຫ້ຕັດລາຍຊື່ອອກໃນບັນຊີ ແລະ ບໍ່ໃຫ້ຮັບເອົາບຸກຄົນອື່ນເຂົ້າມາທົດແທນ. ຖ້າຂະແໜງການໃດມີຄວາມຈຳເປັນທີ່ຈະຈ້າງເອງເພື່ອແກ້ໄຂວຽກງານອັນຮີບດ່ວນໂດຍບໍ່ມີຜົນກະທົບຕໍ່ງົບປະມານແຫ່ງລັດກໍ່ໃຫ້ຮັບເປັນຊ່ວງເວລາໂດຍມີການກຳນົດເວລາທີ່ແນ່ນອນ (ບໍ່ເກີນ 06 ເດືອນ ຫາ 01 ປີ) ພ້ອມທັງກຳນົດແຈ້ງກ່ຽວກັບງົບປະມານທີ່ຈະເບີກຈ່າຍເງິນເດືອນ ຫລື ນະໂຍບາຍອຸດໜູນຕ່າງໆໃຫ້ພວກກ່ຽວ ໂດຍສະເໜີຜ່ານກະຊວງພາຍໃນ ເພື່ອຂໍການອະນຸມັດຈາກລັດຖະບານ.

4. ມອບໃຫ້ກະຊວງພາຍໃນ ເປັນໃຈກາງປະສານສົມທົບກັບບັນດາກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງຜັນຂະຫຍາຍຄຳສັ່ງສະບັບນີ້ ພ້ອມທັງຕິດຕາມ, ກວດກາ, ຊຸກຍູ້ ແລະ ແນະນຳທຸກພາກສ່ວນ ໃນການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ແລ້ວລາຍງານຄວາມຄືບໜ້າໃຫ້ລັດຖະບານຊາບເປັນແຕ່ລະໄລຍະ.

5. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ.

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ

ບ່ອນນຳສົ່ງ:

1. ບັນດາກະຊວງ, ອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນ ພາກສ່ວນລະ 01 ສະບັບ;
2. ສຳເນົາໄວ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 01 ສະບັບ;
3. ສຳເນົາໄວ້ກະຊວງພາຍໃນ 02 ສະບັບ.